# ສະຖານທູດ ອົດສະຕຣາລີ ວຽງຈັນ

## ໂຄງການຊ່ວຍເຫຼືອໂດຍກົງຂະໜາດນ້ອຍເພື່ອການພັດທະນາ
## 2014-2015

ໂຄງການຊ່ວຍເຫຼືອໂດຍກົງ ຫຼື The Direct Aid Program (DAP) ແມ່ນໂຄງການຊ່ວຍເຫຼືອລ້າຂະໜາດນ້ອຍ ບໍລິຫານງານໂດຍ ສະຖານທູດອົດສະຕຣາລີ ປະຈຳ ນະຄອນ ຫຼວງວຽງຈັນ. ຈຸດປະສົງຂອງໂຄງການແມ່ນເພື່ອສະໜັບສະໜູນ ບັນດາໂຄງການຕ່າງໆ ທີ່ກ່ຽວກັບ ວຽກງານ ມະນຸດສະທຳ ແລະ ວຽກງານຫຼຸດຜ່ອນຄວາມທຸກຍາກ.

ໃນເວລາກະກຽມຍື່ນໃບຄຳຮ້ອງ ກະລຸນາ ພິຈາລະນາ ບັນດາ ຂໍ້ກຳນົດຕ່າງໆ ດັ່ງລຸ່ມນີ້:
ແມ່ນໂຄງການປະເພດໃດແດ່ ທີ່ ໂຄງການຊ່ວຍເຫຼືອໂດຍກົງ ສາມາດໃຫ້ທຶນສະໜັບສະໜູນໄດ້:

- ໂຄງການຕ່າງໆ ທີ່ຊ່ວຍເຫຼືອ ເພື່ອການພັດທະນາ ທີ່ຍືນຍົງ ດ້ານ ສາທາລະນະສຸກ, ການສຶກສາ, ບົດບາດຍິງຊາຍ ແລະ ສ້າງຄວາມເຂັ້ມແຂງ ໃຫ້ແກ່ແມ່ຍິງ, ແລະ ແກ້ໄຂ ຄວາມທຸກຍາກ ໂດຍສຸມໃສ່ ດ້ານໂພສະນາການ ແລະ ສະໜັບສະໜູນ ກຸ່ມຄົນທີ່ດ້ອຍໂອກາດ;
- ໂຄງການກ່ຽວກັບການພັດທະນາແບບຍືນຍົງຂະໜາດນ້ອຍຕ່າງໆ ເຊິ່ງ ຈະສົ່ງຜົນປະໂຫຍດໂດຍກົງ ຕໍ່ທ້ອງຖິ່ນ ແລະ ເຮັດໃຫ້ທ້ອງຖິ່ນໄດ້ຮັບຜົນປະໂຫຍດຈາກ ການວາງແຜນໂຄງການ, ການພັດທະນາໂຄງການ ຮວມໄປເຖິງ ການຈັດຕັ້ງປະຕິບັດໂຄງການ;
- ໂຄງການຈະຕ້ອງສ້າງສຳເລັດພາຍໃນເວລາທີ່ກຳນົດໄວ້, ມີຜົນໄດ້ຮັບໃນທັນທີ ເຖິງແມ່ນວ່າ ໂຄງການ ຈະມີເປົ້າໝາຍໃນໄລຍະຍາວກໍ່ຕາມ;
- ໂຄງການໃນທ້ອງຖິ່ນ ທີ່ເຮັດວຽກກ່ຽວກັບສຸຂະພາບຊຸມຊົນ, ໂຮງຮຽນ/ການສຶກສາ, ໂຄງການກໍ່ສ້າງພື້ນຖານ ໂຄງລ່າງຂະໜາດນ້ອຍ, ໂຄງການພັດທະນາຊົນນະບົດ ແລະ ສິ່ງແວດລ້ອມຕ່າງໆ;
- ໃນບາງໂອກາດ ການພິຈາລະນາພິເສດ ກ່ຽວກັບໂຄງການ ທີ່ກ່ຽວຂ້ອງ ກັບໄພທຳມະຊາດ ຕ່າງໆ ກໍ່ສາມາດຖືກພິຈາລະນາ ແລະ ມີການຈຳກັດ ເປັນແຕ່ລະກໍລະນີ, ໂຄງການທີ່ກ່ຽວກັບ ການອະນຸລັກ ວັດທະນະທຳ ແລະ ກ່ຽວກັບກິລາ ຈະຕ້ອງມີ ຈຸດປະສົງ ທີ່ກ່ຽວຂ້ອງ ກັບວຽກງານມະນຸດສະທຳ ຢ່າງຈະແຈ້ງ;
- ພ້ອມນີ້, ໂຄງການທີ່ເຮັດວຽກກ່ຽວກັບ ການສ້າງຄວາມອາດສາມາດ, ລວມມີ ການປົກຄອງ ແລະ ສິດທິມະນຸດ ກໍ່ສາມາດເຮັດບົດສະເໜີໂຄງການໄດ້.

Australian Embassy Vientiane
KM4, Thadeua Rd, PO Box 292, Vientiane Lao PDR
Telephone: 856-21-353800, Facsimile: 856-21-353801

ໂຄງການປະເພດໃດແດ່ ທີ່ ໂຄງການນີ້ <u>ບໍ່ສາມາດ</u> ສະໜັບສະໜູນໄດ້:

- ຄ່າກິນຢູ່ ພັກເຊົາ, ຄ່າເດີນທາງ, ຊື້ອຸປະກອນຫ້ອງການ, ອຸປະກອນຕ່າງໆ ເຊັ່ນ ກ້ອງຖ່າຍຮູບ ຫຼື ເຄື່ອງຫຼິ້ນ ດີວີດີ, ວີດີໂອ, ຄ່າລົດເດີນທາງ, ຄ່າເຊົ່າຫ້ອງ, ຄ່າຈ້າງທີ່ປຶກສາ ແລະ ຄ່າຄູຝຶກສອນ, ການບຳລຸງ ແລະ ຮັກສາ, ວຽກງານຫ້ອງການທົ່ວໄປ ຫຼື ລາຍຈ່າຍທີ່ກ່ຽວກັບການຮັບພະນັກງານ, ໂຄງການເງິນກູ້ຕ່າງໆ.
- ອີງໃສ່ນະໂຍບາຍຂອງລັດຖະບານອົດສະຕຣາລີ, ທຸກໆໂຄງການ ທີ່ ມີການກໍ່ສ້າງ ພາຍໃຕ້ໂຄງການ ນີ້ ຕ້ອງ ໄດ້ມາດຕະຖານ ຫຼື ກາຍມາດຕະຖານຂອງລັດຖະບານອົດສະຕຣາລີທີ່ກຳໜົດໄວ້ ແລະ ວັດສະດຸໃນ ການກໍ່ສ້າງ ຕ້ອງບໍ່ມີ ສານ ASBESTOS.

ສິ່ງທີ່ຕ້ອງພິຈາລະນາ:

- ຜູ້ຍື່ນຄຳຮ້ອງຂໍໂຄງການ ຕ້ອງ ມີຂໍ້ມູນ ລະອຽດ ກ່ຽວກັບ ຈຸດປະສົງຂອງໂຄງການ, ຫຼັກຖານ ທີ່ສາມາດ ດຳເນີນ ໂຄງການໄດ້, ລາຍລະອຽດດ້ານການເງິນຂອງໂຄງການ ແລະ ລາຍຊື່ ຂອງຜູ້ທີ່ຈະຕິດຕາມ ໂຄງການ;
- ສະແດງໃຫ້ເຫັນວ່າ ເຮັດແນວໃດ ທ້ອງຖິ່ນ ຈະໄດ້ຮັບຜົນປະໂຫຍດຈາກໂຄງການ ຈະມີສ່ວນຮ່ວມ ແລະ ຮັບຮູ້  ໃນໂຄງການ ເຊັ່ນ: ທ້ອງຖິ່ນມີສ່ວນຮ່ວມ ຂອງງົບປະມານທັງໝົດຂອງໂຄງການ, ປະກອບ ສ່ວນດ້ານແຮງງານ, ປະກອບສ່ວນດ້ານເນື້ອທີ່ດິນ ຫຼື ປະກອບສ່ວນດ້ານອຸປະກອນຕ່າງໆ;
- ສະແດງໃຫ້ເຫັນວ່າ ຄ່າໃຊ້ຈ່າຍຕ່າງໆ ດ້ານການບຳລຸງຮັກສາໂຄງການ ແມ່ນ ຜູ້ຍື່ນຄຳຮ້ອງ ຈະເປັນຜູ້ຮັບຜິດຊອບ;
- ໃນເວລາສຳເລັດໂຄງການແລ້ວ, ຜູ້ຮັບຜິດຊອບໂຄງການ ຈຳເປັນຕ້ອງໄດ້ ເຮັດບົດສະຫຼຸບ ລາຍງານດ້ານ ງົບປະມານລະອຽດ ຮວມມີ ລາຍງານການຊື້ອຸປະກອນທັງໝົດ ແລະ ຕ້ອງຕິດຂັດ ໃບຮັບເງິນທີ່ມີກາຈ້ຳ ສີແດງ (ບໍ່ແມ່ນໃບສຳເນົາ) ຕາມກຳນົດເວລາ ທີ່ໄດ້ລະບຸໄວ້ໃນ ໃບຄຳຮ້ອງ ຫຼື ກ່ອນການ ປະກາດ ງວດ ທຶນຊ່ວຍເຫຼືອ ຂອງປີຕໍ່ໄປ;
- ສະຖານທູດ ອົດສະຕຣາລີ ມີຈຸດປະສົງ ຈະໄປຢ້ຽມຢາມໂຄງການເມື່ອໂຄງການສຳເລັດແລ້ວ;
- ງົບປະມານທັງໝົດຂອງໂຄງການຫນຶ່ງ ແມ່ນມີມູນຄ່າ ປະມານ 5,000 ຫາ 30,000 ໂດລາອົດສະຕຣາລີ, ຖ້າ ຫລາຍກວ່ານັ້ນ ກໍ່ອາດຈະຖືກພິຈາລະນາ ໂດຍ ຄະນະກຳມະການ ຂອງທຶນຊ່ວຍເຫລືອໂດຍກົງ.
- ຜູ້ຍື່ນໃບຄຳຮ້ອງ ຈະຖືກພິຈາລະນາໂຄງການ ຕະຫຼອດໄລຍະເວລາຂອງ ງວດປີ ການໃຫ້ທຶນ ສະໜັບສະໜູນຂອງ ສະຖານທູດ ອົດສະຕຣາລີ;
- ໃບຄຳຮ້ອງ ແມ່ນມີ ທັງ ພາສາລາວ ແລະ ພາສາອັງກິດ ຢູ່ ສະຖານທູດ ອົດສະຕຣາລີ, ວຽງຈັນ ຫຼື ສາມາດພິມອອກຈາກ ເວບໄຊ ຂອງ ສະຖານທູດ: http://www.laos.embassy.gov.au
- ໃບຄຳຮ້ອງ ຕ້ອງ ສົ່ງເຖິງ ຜູ້ປະສານງານ ໂຄງການຊ່ວຍເຫຼືອໂດຍກົງ, ສະຖານທູດ ອົດສະຕຣາລີ, ວຽງຈັນ;
- ບົດສະເໜີໂຄງການຄວນຈະຖືກຮັບຮູ້ໂດຍ ອຳນາດການປົກຄອງທ້ອງຖິ່ນ ຫຼື ຊຸມຊົນ.
- ສຳລັບໂຄງການ ທີ່ກ່ຽວກັບ ນ້ຳ ແລະ ການໃຊ້ນ້ຳ ແມ່ນ ຄວນຈະມີ ຜົນຂອງການ ກວດນ້ຳ ຕິດຂັດມາພ້ອມ;
- ສຳລັບໂຄງການ  ທີ່ກ່ຽວກັບກໍ່ສ້າງ ຄວນຈະມີ ແຜນວາດການກໍ່ສ້າງຕິດຂັດມາພ້ອມ ວັດສະດຸໃນການ ກໍ່ສ້າງ ຕ້ອງບໍ່ມີ ສານ ASBESTOS.

## ແບບຟອມຂໍທຶນໂຄງການ

1. ຊື່ໂຄງການ

............................................................................................................................
............................................................................................................................
..................................................................................................

2. ສະຖານທີ່ຕັ້ງຂອງໂຄງການ (ແຂວງ, ເມືອງ, ບ້ານ ຖ້າມີ)

............................................................................................................................
............................................................................................................................
............................................................................................................................
..................................................................................................

3. ໂຄງການນີ້ ຈະໃຊ້ເວລາດົນປານໃດ? ໂຄງການຄວນຈະສຳເລັດ ແລະ ສະຫຼຸບລາຍຈ່າຍໄດ້ ພາຍໃນ ເວລາ 12 ເດືອນ ພາຍຫຼັງທີ່ໄດ້ຮັບເງິນສະໜັບສະໜູນຈາກໂຄງການ. ກະລຸນາ ຍື່ນລາຍ ລະອຽດ ລາຍການຕ່າງໆ ທີ່ວັດແທກໄດ້ວ່າໂຄງການຈະສຳເລັດ (ເຊັ່ນ: ແຜນວາດໂຄງການ, ການຂົນສົ່ງ ວັດສະດຸ ກໍ່ສ້າງ, ໄລຍະເລີ່ມຕົ້ນກໍ່ສ້າງ, ໄລຍະສຳເລັດການກໍ່ສ້າງ ແລະ ອື່ນໆ)

............................................................................................................................
............................................................................................................................
............................................................................................................................
............................................................................................................................
............................................................................................................................
............................................................................................................................

4. ສະຫຼຸບຫຍໍ້ ເຖິງ ຈຸດປະສົງຕົ້ນຕໍ ຂອງໂຄງການ.

............................................................................................................................
............................................................................................................................
............................................................................................................................
............................................................................................................................
............................................................................................................................
............................................................................................................................
............................................................................................................................
............................................................................................................................
............................................................................................................................
..................................................................................................................

5. ແມ່ນໃຜແດ່ຈະໄດ້ຮັບຜົນປະໂຫຍດຈາກໂຄງການນີ້ ແລະ ພວກເຂົາເຈົ້າ ຈະມີສ່ວນຮ່ວມໃນການ ຈັດຕັ້ງປະຕິບັດໂຄງການນີ້ແນວໃດແດ່?

............................................................................................................................
............................................................................................................................
............................................................................................................................
............................................................................................................................
........................................................................................................................

ລາຍລະອຽດດ້ານງົບປະມານຂອງໂຄງການ

6. ງົບປະມານລາຍຈ່າຍຂອງໂຄງການທັງໝົດເທົ່າໃດ?

…………………………………………………………………………………………………………
…………………………………………………………………………………………………………
…………………………………………………………………………………

ກະລຸນາລະບຸລະອຽດ, ສະຫຼຸບລາຍລະອຽດຂອງລາຍການທັງໝົດ ລວມທັງ ຄ່າໃຊ້ຈ່າຍ ທີ່ຄິດໄລ່ ຈາກການມີສ່ວນຮ່ວມ ແລະ ບອກລາຍລະອຽດຂອງຜູ້ທີ່ມີສ່ວນຮ່ວມນຳ (ລາຍການທັງໝົດ ເຫຼົ່ານີ້ ສາມາດ ຂຽນແຍກຕ່າງຫາກ ແລະ ຕິດຂັດມາພ້ອມໃບຄຳຮ້ອງ)

7. ງົບປະມານທັງໝົດທີ່ ຂໍການສະໜັບສະໜູນຈາກໂຄງການຊ່ວຍເຫຼືອໂດຍກົງ ຫຼື Direct Aid Program (DAP).

…………………………………………………………………………………………………………
…………………………………………………………………………………………………………
…………………………………………………………………………………

**ຂໍແຈ້ງໃຫ້ຊາບວ່າ ບົດລາຍງານຜົນການ ກໍ່ສ້າງໂຄງການ** ຄັ້ງສຸດທ້າຍ, ລວມມີ**ໃບຮັບເງິນທັງໝົດທີ່ເກີດຈາກການໃຊ້ຈ່າຍ ແມ່ນ ຈຳເປັນສຳລັບການສະຫຼຸບ ງົບປະມານລວມທັງໝົດຂອງໂຄງການ.** ຖ້າບໍ່ສົ່ງຂໍ້ມູນເຫຼົ່ານີ້ໃຫ້ ແກ່ໂຄງການໃຫ້ທັນເວລາ ມັນຈະສົ່ງຜົນກະທົບຕໍ່ ບົດສະເໜີໂຄງການທີ່ຈະສົ່ງເຂົ້າມາໃນອະນາຄົດ ຫຼື ອາດຈະຕ້ອງສົ່ງຜົນໃຫ້ໂຄງການດັ່ງກ່າວ ຕ້ອງໄດ້ຄືນງົບປະມານໃຫ້ແກ ລັດຖະບານ **ອົດສະຕຣາລີ**

ລາຍການລະອຽດທີ່ຈະສະເໜີຕໍ່ໂຄງການ

8. ຊື່ ແລະ ລາຍລະອຽດຕ່າງໆ (ທີ່ຢູ່, ໂທລະສັບ, ເບີ ແຟກ, ອີເມວ) ຂອງເຈົ້າຂອງໂຄງການ.

…………………………………………………………………………………………………………
…………………………………………………………………………………………………………
…………………………………………………………………………………………………………
…………………………………………………………………………………………………………
…………………………………………………………………………………………………………
…………………………………………………………………………………………………………
………………………………………………

9. ເຈົ້າຂອງໂຄງການທີ່ເຄີຍໄດ້ຮັບການຊ່ວຍເຫຼືອ ຈາກໂຄງການຊ່ວຍເຫຼືອໂດຍກົງນີ້ ມາກ່ອນບໍ່ ຫຼື ເຄີຍໄດ້ຮັບ ການຊ່ວຍເຫຼືອ ຈາກ ໂຄງການຊ່ວຍເຫຼືອດ້ານການພັດທະນາອື່ນໆ ຂອງ ສະຖານທູດອົດສະຕຣາລີ ມາກ່ອນບໍ່? ກະລຸນາຍົກຕົວຢ່າງ ຈາກການຊ່ວຍເຫຼືອຂອງອົງການ ຈັດຕັ້ງອື່ນໆ ພ້ອມລາຍລະອຽດ ຂອງກິດຈະກຳ ທີ່ເຄີຍປະຕິບັດແລ້ວ ແລະໄດ້ຮັບຜົນສຳເລັດ. ສະຖານທູດອົດສະຕຣາລີ ອາດຈະ ໄດ້ຂໍລາຍລະອຽດກ່ຽວກັບ ບັນຊີທະນາຄານ ແລະ ຫຼັກຖານ ດ້ານການເງິນອື່ນໆ ເພື່ອເປັນເອກະສານອ້າງອີງ ໃນການປະຕິບັດວຽກງານໂຄງການຕ່າງໆ ຂອງ ເຈົ້າຂອງໂຄງການໃນໄລຍະຜ່ານມາ.

………………………………………………………………………………………………………
………………………………………………………………………………………………………
………………………………………………………………………………………………………
…………………………………………………………………………………

10. ກະລຸນາບອກ ລາຍຊື່ ແລະ ຂໍ້ມູນເພື່ອຕິດຕໍ່ສອບຖາມ ຂອງ ສອງທ່ານ ຕິດຂັດມາພ້ອມ.

………………………………………………………………………………………………………
………………………………………………………………………………………………………